# ນ້ຳເທີນ 1

## ຂ່າວສານສັງຄົມປະຈຳເດືອນ (7)



## ຂ່າວເດັ່ນປະຈຳເດືອນ:

- ຕິດຕາມໂຄງການກໍ່ສ້າງນ້ຳປະປາ ບ້ານຈອມທອງ ພາຍໃຕ້ທຶນ CDF
- NT1PC ມອບເງິນສະໜັບສະໜູນໃນວັນອະນຸລັກສັດນ້ຳ-ສັດປ່າແຫ່ງຊາດ
- NT1PC ມອບເງິນສະໜັບສະໜູນໃນພິທີປ່ອຍປາ ທີ່ ເມືອງວຽງທອງ
- ກອງປະຊຸມ ລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດບັດກິດຈະກຳຄຸ້ມຄອງວຽກ ຊີວະນາໆພັນ ໂຄງການ ເຂື່ອນໄຟຟ້ານ້ຳເທີນ 1 ໄລຍະ 6 ເດືອນ ຕົ້ນປີ 2023



## ຂ່າວສານໃນສະບັບນີ້:

- ກອງປະຊຸມ ລາຍງານຄວາມຄືບໜ້າປະຈຳເດືອນຂັ້ນບ້ານ ທີ່ ບ້ານຫ້ວຍຫອຍ
- ວຽກງານສົ່ງເສີມການຂາຍ ແລະ ການຕະຫລາດ ທີ່ ບ້ານຈັດສັນ-ຍົກຍ້າຍ ຫ້ວຍຫອຍ
- NT1PC ມອບທຶນສະໜັບສະໜູນ ແລະ ເຂົ້າຮ່ວມກິດຈະກຳຂອງ ສູນກາງສະຫະພັນແມ່ຍິງລາວ ໃນການສະເຫຼີມສະຫຼອງວັນສ້າງຕັ້ງສະຫະພັນແມ່ຍິງລາວ

ອ່ານຫົວຂໍ້ອື່ນໆ ແລະ ເນື້ອຫາຂ່າວທັງໝົດ ໜ້າຖັດໄປ >>>

## 1. ຕິດຕາມໂຄງການກໍ່ສ້າງນໍ້າປະປາ ບ້ານຈອມທອງ



ວັນທີ 4 ກໍລະກົດ 2023 ຜ່ານມານີ້, ທ່ານ ບຸນເພັງ ດວງມາລາ, ຜູ້ຈັດການພາກສະໜາມຝ່າຍສັງຄົມນໍ້າເທີນ 1 ປະຈຳເມືອງວຽງທອງ ໄດ້ລົງຕິດຕາມຄວາມຄືບໜ້າ ຮ່ວມກັບຜູ້ຄຸມງານພາກສະໜາມ ຈາກນໍ້າປະປາ ແຂວງບໍລິຄຳໄຊ ເພື່ອກວດເບິ່ງຄວາມຄືບໜ້າຂອງການກໍ່ສ້າງນໍ້າປະປາ ທີ່ ບ້ານ ຈອມທອງ, ເມືອງ ວຽງທອງ, ແຂວງ ບໍລິຄຳໄຊ. ໂຄງການນີ້ແມ່ນໄດ້ຮັບ ນຳໃຊ້ແຫຼ່ງທຶນຈາກ ກອງທຶນພັດທະນາຊຸມຊົນ (CDF) ແຂວງບໍລິຄຳໄຊ ພາຍໃຕ້ການສະໜັບສະໜູນໂດຍ ບໍລິສັດ ໄຟຟ້ານໍ້າເທີນ 1 ຈຳກັດ ໃນມູນຄ່າທັງໝົດແມ່ນ 257.223 USD, ເຊິ່ງໄດ້ເລີ່ມການກໍ່ສ້າງຕັ້ງແຕ່ ເດືອນ ພະຈິກ 2022 ໂດຍ ບໍລິສັດ ລັດວິສາຫະກິດນໍ້າປະປາ ແຂວງບໍລິຄຳໄຊ.



ມາຮອດເດືອນ ມິຖຸນາ 2023, ໂຄງການໄດ້ສຳເລັດການຕໍ່ນໍ້າເຂົ້າເຮືອນປະຊາຊົນເຖິງ 95 ຫຼັງ ແລະ ກຳລັງສືບຕໍ່ອີກ 50 ຫຼັງຄາເຮືອນ. ໃນຕົ້ນ ເດືອນ ກໍລະກົດ, ໂຄງການມີຄວາມຄືບໜ້າໃນການກໍ່ສ້າງປະມານ 62%. ເມື່ອກໍ່ສ້າງສຳເລັດແລ້ວ, ໂຄງການດັ່ງກ່າວ ຈະມີກຳລັງການຜະລິດ 240 ແມັດກ້ອນ/ມື້, ເຊິ່ງຈະແຈກຈ່າຍໃຫ້ກັບຄອບຄົວປະຊາຊົນ ກວມເອົາ 2 ຄຸ້ມບ້ານຄື: ຄຸ້ມບ້ານຈອມທອງ ແລະ ຄຸ້ມບ້ານທາດພູວຽງ.



## 2. ກອງປະຊຸມຂັ້ນບ້ານ ເພື່ອລາຍງານຄວາມຄືບໜ້າປະຈຳເດືອນ ມິຖຸນາ ແລະ ກໍລະກົດ 2023 ທີ່ ບ້ານ ຫ້ວຍທອຍ



ໃນຕອນເຊົ້າ ວັນທີ 27 ກໍລະກົດ 2023, ບ້ານຫ້ວຍທອຍໄດ້ຈັດກອງປະຊຸມຂັ້ນບ້ານ ເພື່ອລາຍງານຄວາມຄືບໜ້າປະຈຳເດືອນມິຖຸນາ ແລະ ກໍລະກົດ, ໂດຍຈັດຂຶ້ນຢູ່ທີ່ສະໂມສອນບ້ານຫ້ວຍທອຍ ພາຍໃຕ້ການເປັນປະທານຂອງທ່ານ ຕຽງ ໄຊຍະສານ ນາຍບ້ານໃຫຍ່ ບ້ານຫ້ວຍທອຍ ແລະ ປະທານຮ່ວມໂດຍ ທ່ານ ອຸທອນ ສີງຫາດວງປັນຍາ - ຫົວໜ້າກອງເລຂາ (RMU) ພ້ອມພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ ເຊັ່ນ: ຫ້ອງການແມ່ຍິງເມືອງ, ຜູ້ຕາງໜ້າປະທານກອງທຶນ, ຫ້ອງການສຶກສາເມືອງ, ຄະນະປະສານງານເມືອງ (DWG), ໂຮງໝໍນ້ອຍ, ໂຮງຮຽນ ມສ ຫ້ວຍທອຍ, ກຸ່ມຜະລິດ, ການຈັດຕັ້ງບ້ານຫ້ວຍທອຍ, ນາຍບ້ານເມືອງມ່ວນ, ນາຍບ້ານນໍ້າຢ້າງ, ທີມງານກຸ່ມບໍລິສັດພອນສັກ ແລະ ບໍລິສັດ ໄຟຟ້ານໍ້າເທີນ 1 ເຂົ້າຮ່ວມຢ່າງພ້ອມພຽງໜ້າ ລວມທັງໝົດມີຜູ້ເຂົ້າຮ່ວມ 38 ທ່ານ, ຍິງ 15 ທ່ານ.

ຈຸດປະສົງຂອງກອງປະຊຸມຄັ້ງນີ້ ແມ່ນເພື່ອທົບທວນຄືນການຈັດຕັ້ງປະຕິບັດວຽກໃນ 1 ເດືອນຜ່ານມາ ເຊັ່ນ: ລາຍງານຫຍໍ້ກ່ຽວກັບໜ້າວຽກຕາມບົດບັນທຶກໃນຄັ້ງວັນທີ 31/5/2023, ຜົນສຳເລັດ, ວຽກງານທີ່ຄົງຄ້າງ ແລະ ລາຍງານການຕິດຕາມກວດກາບັນດາກິດຈະກຳຟື້ນຟູທີ່ໂຄງການໄດ້ໃຫ້ການສະໜັບສະໜູນ ເຊັ່ນ: ການປູກຝັງ, ການລ້ຽງ ແລະ ການບໍລິການ, ກອງທຶນພັດທະນາບ້ານ, ການສຶກສາ, ວຽກງານສາທາ ແລະ ການແກ້ໄຂຂໍ້ຂັດແຍ່ງ ລວມທັງແຜນການຈັດຕັ້ງປະຕິບັດໃນເດືອນຕໍ່ໄປ.

- **CDF: Community Development Fund (ກອງທຶນພັດທະນາຊຸມຊົນ)**
- **RMU: Resettlement Management Unit (ໜ່ວຍງານຍົກຍ້າຍຈັດສັນ)**
- **DWG: District Working Group (ກຸ່ມປະສານງານເມືອງ)**

## 3. ກອງປະຊຸມ ລາຍງານຄວາມຄືບໜ້າ ການຈັດຕັ້ງປະຕິບັດບັດກິດຈະກຳຄຸ້ມຄອງວຽກ ຊີວະນາໆພັນ ໂຄງການ ນ້ຳເທີນ 1 ໄລຍະ 6 ເດືອນຕົ້ນປີ 2023



ທ່ານ ນາງ ສອນດາລິນ ພູມວິງໄຊ ຜູ້ອຳນວຍການພະແນກສັງຄົມ ພ້ອມດ້ວຍທີມງານໄດ້ເຂົ້າຮ່ວມກອງປະຊຸມລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດກິດຈະກຳ ຄຸ້ມຄອງວຽກຊີວະນາໆພັນໂຄງ ການເຂື່ອນໄຟຟ້ານ້ຳເທີນ 1 ໄລຍະ 6 ເດືອນຕົ້ນປີ 2023. ກອງປະຊຸມໄດ້ຈັດຂຶ້ນໃນຕອນເຊົ້າວັນທີ 28 ກໍລະກົດ 2023 ຢູ່ ຫ້ອງປະຊຸມ ຂອງຫ້ອງການກະສິກຳ ແລະ ປ່າໄມ້ເມືອງວຽງທອງ, ໂດຍການເປັນປະທານຂອງ ທ່ານ ສອນໄຊ ພິມມະວົງ, ຮອງຫົວໜ້າພະແນກກະສິກຳ ແລະ ປ່າໄມ້ ແຂວງບໍລິຄຳໄຊ ແລະ ທັງເປັນຮອງປະທານຄະນະຊີ້ນຳວຽກຄຸ້ມຄອງອ່າງໂຕ່ງ ເຂື່ອນໄຟຟ້ານ້ຳເທີນ 1 ແລະ ເຂົ້າຮ່ວມໂດຍບັນດາພາກສ່ວນທີ່ກ່ຽວຂ້ອງຂັ້ນແຂວງ ຄື: ກອງຄຸ້ມຄອງປ່າສະຫງວນ, ກອງກວດກາປ່າໄມ້ ແລະ ຈາກ 3 ເມືອງ ຄື: ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ຫ້ອງວ່າການ ປກຊ ເມືອງວຽງທອງ, ປາກກະດິງ ແລະ ຄຳເກີດ ພ້ອມທັງ 6 ບ້ານເປົ້າໝາຍທີ່ຢູ່ຕິດກັບເຂດປົກປັກຮັກສາຊີວະນາໆພັນ ຂອງ 3 ເມືອງ ເຂົ້າຮ່ວມ ລວມທັງພະແນກສິ່ງແວດລ້ອມ ໂຄງການເຂື່ອນໄຟຟ້ານ້ຳເທີນ 1 ລວມຜູ້ເຂົ້າຮ່ວມທັງໝົດ 31 ທ່ານ, ຍິງ 1 ທ່ານ.

ກອງປະຊຸມດັ່ງກ່າວຈັດໂດຍພະແນກສິ່ງແວດລ້ອມ, ໂຄງການເຂື່ອນໄຟຟ້ານ້ຳເທີນ 1 ຮ່ວມກັບພະແນກກະສິກຳ ແລະ ປ່າໄມ້ ແຂວງບໍລິຄຳໄຊ. ຈຸດປະສົງຂອງກອງປະຊຸມໃນຄັ້ງນີ້ແມ່ນເພື່ອລາຍງານຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແຜນຄຸ້ມຄອງເຂດຊົດເຊີຍຊີວະນາໆພັນໂຄງການເຂື່ອນໄຟຟ້ານ້ຳເທີນ 1 ໃນໄລຍະ 6 ເດືອນຕົ້ນປີ 2023, ຮັບຟັງຄຳເຫັນຈາກຄະນະບ້ານທີ່ຈັດຕັ້ງປະຕິບັດກິດຈະກຳເພື່ອປຶກສາຫາລື, ຕີລາຄາຜົນການຈັດຕັ້ງປະຕິບັດທີ່ຜ່ານມາ ແລະ ສະເໜີທິດທາງຕໍ່ໜ້າໃນການຄຸ້ມຄອງເຂດຊົດເຊີຍຊີວະນາໆພັນໂຄງການເຂື່ອນໄຟຟ້ານ້ຳເທີນ 1.

## 4. ບໍລິສັດ ໄຟຟ້ານ້ຳເທີນ 1 ຈຳກັດ ສະໜັບສະໜູນງົບປະມານ ເຂົ້າໃນກິດຈະກຳປ່ອຍປາ ເນື່ອງໃນວັນອະນຸລັກສັດນ້ຳ-ສັດປ່າແຫ່ງຊາດ ປະຈຳປີ 2023

ເນື່ອງໃນໂອກາດວັນອະນຸລັກສັດນ້ຳ - ສັດປ່າແຫ່ງຊາດ ປະຈຳປີ 2023, ໃນຕອນເຊົ້າວັນທີ 13 ກໍລະກົດ 2023, ພະແນກກະສິກຳ ແລະ ປ່າໄມ້ ແຂວງບໍລິຄຳໄຊ ສົມທົບກັບ ຫ້ອງການ ກະສິກຳ ແລະ ປ່າໄມ້ ເມືອງປາກກະດິງ ໄດ້ຈັດພິທີປ່ອຍປາຈຳນວນຫຼາຍກວ່າ 50.000 ໂຕ ລົງສູ່ທຳມະຊາດ ຢູ່ທີ່ວັງສະຫງວນ ວັງທ່າວັດບ້ານດອນໄຊ ຢູ່ແມ່ນ້ຳກະດິງ ເມືອງປາກກະດິງ, ແຂວງບໍລິຄຳໄຊ. ໃນນັ້ນ, ປະກອບມີປະເພດ ປານິນ ແລະ ປາໄນ, ໂດຍໄດ້ຮັບການອຸປະຖຳຈາກ ບໍລິສັດ ໄຟຟ້ານ້ຳເທີນ 1 ຈຳກັດ ເປັນຈຳນວນເງິນ 20.000.000 ກີບ ມອບໂດຍ ທ່ານ ຂັນຕິ ພັນທະວົງ, ຮອງອຳນວຍການ ບໍລິສັດໄຟຟ້າ ນ້ຳເທີນ 1. ພິທີປ່ອຍປາໃນຄັ້ງນີ້ ໄດ້ຮັບກຽດເຂົ້າຮ່ວມໂດຍ ການນຳຂັ້ນແຂວງ, ເມືອງ ແລະ ທ້ອງຖິ່ນ ນຳໂດຍ ທ່ານ ບຸນເສັງ ປະທຳມະວົງ - ຮອງເຈົ້າແຂວງບໍລິຄຳໄຊ ພ້ອມດ້ວຍຄະນະ, ທ່ານ ພູເຂົາເງິນ ອິນທະວົງ - ເຈົ້າເມືອງປາກກະດິງ, ທ່ານ ພັດທະຈອນ ແກ້ວພຸດທະວົງ - ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ແຂວງ, ລວມທັງຜູ້ຕາງໜ້າບໍລິສັດ ໄຟຟ້ານ້ຳເທີນ 1 ຈຳກັດ, ບັນດາຜູ້ຕາງໜ້າພະແນກ-ຂະແໜງການອ້ອມຂ້າງແຂວງ ແລະ ຫ້ອງການອ້ອມຂ້າງເມືອງ ຕະຫຼອດຮອດອຳນາດການປົກຄອງບ້ານ ພ້ອມດ້ວຍພໍ່ແມ່ປະຊາຊົນບ້ານອ້ອມຂ້າງເຂົ້າຮ່ວມ.









## 5. ບໍລິສັດ ໄຟຟ້ານ້ຳເທີນ 1 ຈຳກັດ ສົມທົບທຶນ ເຂົ້າໃນພິທີປ່ອຍປາ ທີ່ ເມືອງວຽງທອງ

**"ເວລາໃດກໍ່ຕາມ, ພວກເຮົາທຸກຄົນຕ້ອງໄດ້ເອົາໃຈໃສ່ປົກປັກຮັກສາ ເພື່ອເປັນມູນມໍລະດົກສືບທອດເຖິງລູກ-ຫຼານ, ເຮັດໃຫ້ສັດນ້ຳມີຄວາມອຸດົມສົມບູນ ແລະ ມີຄວາມດຸ່ນດ່ຽງທາງດ້ານທາດຊີ້ນ ຄຽງຄູ່ກັບພວກເຮົາຕະຫຼອດໄປໃຫ້ສົມກັບຄຳວ່າ ໃນນ້ຳມີປາ ໃນນາມີເຂົ້າ ໃນປະເທດເຮົາໃຫ້ຄວາມອຸດົມສົມບູນເຕັມໄປດ້ວຍຊັບພະຍາກອນທຳມະຊາດ." ກ່າວໂດຍ ທ່ານ ພົອ ຄຳແພນ ວິລິ້ທຳ ເຈົ້າເມືອງວຽງທອງ.**



ໃນວັນທີ 11 ກໍລະກົດ 2023 ທີ່ ເມືອງ ວຽງທອງ, ແຂວງ ບໍລິຄຳໄຊ ໄດ້ຈັດພິທີປ່ອຍປາ ເນື່ອງໃນໂອກາດວັນອະນຸລັກສັດນ້ຳ-ສັດປ່າ ແຫ່ງຊາດ ແລະ ວັນຄ້າຍວັນເກີດຂອງ ທ່ານ ສຸພານຸວົງ ຄົບຮອບ 114 ປີ. ພິທີດັ່ງກ່າວຈັດຢູ່ທີ່ທ່ານ້ຳງອນ ບ້ານນ້ຳຢ້າງ. ໂດຍເປັນກຽດເຂົ້າຮ່ວມພິທີຂອງ ທ່ານ ພົອ ຄຳແພນ ວິລິ້ທຳ - ເຈົ້າເມືອງວຽງທອງ, ລວມທັງ ບັນດາການນຳຂອງເມືອງ, ຜູ້ຕາງໜ້າບໍລິສັດ ໄຟຟ້ານ້ຳເທີນ 1 ຈຳກັດ ແລະ ພະນັກງານ, ທະຫານ-ຕຳຫຼວດ ເຂົ້າຮ່ວມ.

ພາຍໃນພິທີ, ທ່ານ ພົອ ຄຳແພນ ວິລິ້ທຳ ເຈົ້າເມືອງວຽງທອງ ໄດ້ໃຫ້ກຽດຂຶ້ນກ່າວຈຸດປະສົງ ແລະ ໃຫ້ຄຳເຫັນໃນການປ່ອຍປາຄັ້ງນີ້ ເພື່ອເປັນການຈັດຕັ້ງຜັນຂະຫຍາຍກົດໝາຍ ວ່າດ້ວຍການປະມົງ ແລະ ກົດໝາຍ ວ່າດ້ວຍປ່າໄມ້ ວັນອະນຸລັກສັດນ້ຳ-ສັດປ່າ, ໃນການປ່ອຍສັດນ້ຳຄືນສູ່ທຳມະຊາດເປັນຂອງປວງຊົນລາວຢ່າງແທ້ຈິງ ແລະ ເຮັດໃຫ້ທຸກຄົນໄດ້ມີສ່ວນຮ່ວມກວ້າງຂວາງກວ່າເກົ່າ. ປາທີ່ນຳມາປ່ອຍ ປະກອບມີ 4 ຊະນິດຄື: ປານິນ ຈຳນວນ 3.000 ໂຕ, ປາປາກ 2.000 ໂຕ, ປານວນຈັນ 3.000 ໂຕ ແລະ ປາໃນ 2.000 ໂຕ, ລວມທັງໝົດ 10.000 ໂຕ. ລູກປາທີ່ນຳມາປ່ອຍຄັ້ງນີ້ ແມ່ນໄດ້ຮັບການປະກອບສ່ວນໂດຍ ບໍລິສັດ ໄຟຟ້ານ້ຳເທີນ 1 ຈຳກັດ ເປັນເງິນຈຳນວນ 5.000.000 ກີບ. ນອກຈາກນັ້ນ, ກໍ່ຍັງມີຂະບວນການທຳລາຍສັດປ່າທີ່ເຈົ້າໜ້າທີ່ຍຶດໄດ້ມາຈາກການຂົນສົ່ງຊື້-ຂາຍຂອງປະຊາຊົນ ໃນຮູບແບບທີ່ຜິດກົດໝາຍ, ສັດທີຍຶດໄດ້ມາທຳລາຍຄັ້ງນີ້ລວມມີ ກະຮອກ (ຕາຍ) ຈຳນວນ 90 ໂຕ, ບ່າງ (ຕາຍ) 1 ໂຕ, ເຫງັນ (ຕາຍ) 2 ໂຕ ແລະ ກະດ່າງ (ຕາຍ) 1 ໂຕ. ໃນການທຳລາຍຄັ້ງນີ້ແມ່ນໄດ້ຂຸດຂຸມຝັງ ເພື່ອໃຫ້ຍ່ອຍສະຫຼາຍຕາມທຳມະຊາດ.



(ພິທີມອບເງິນສົມທົບທຶນ)



(ກິດຈະກຳປ່ອຍປາ)



(ກິດຈະກຳທຳລາຍສັດປ່າຊື້-ຊາຍຜິດກົດໝາຍ)

## 6. ການສົ່ງເສີມການຂາຍ ແລະ ການຕະຫລາດ

ທີມງານສົ່ງເສີມການຂາຍ ແລະ ການຕະຫຼາດ ນຳພາໂດຍ ທ່ານ ບັນທະວົງ ສີລະປະພັນ ພະນັກງານອາວຸໂສ ການຕະຫລາດ ພະແນກສັງຄົມ ໄດ້ເຜີຍແຜ່ວຽກງານການຕະຫຼາດໃຫ້ສະມາຊິກກຸ່ມປູກຜັກ, ກຸ່ມລ້ຽງສັດ ແລະ ກຸ່ມອັອບຟາມ ໃຫ້ຮູ້ເຖິງຂໍ້ມູນຄວາມຕ້ອງການຂອງຕະຫຼາດ ເຊັ່ນ: ປະເພດສິນຄ້າທີ່ຕ້ອງການຊື້, ປະລິມານຄວາມຕ້ອງການ, ແລະ ລາຄາສິນຄ້າ ພ້ອມທັງໄດ້ ແລກປ່ຽນ ແລະ ເຜີຍແຜ່ຂໍ້ມູນລະຫວ່າງພໍ່ຄ້າ-ແມ່ຄ້າ ແລະ ເບີຕິດຕໍ່ຜູ້ຮັບຊື້ພືດຜັກ ແລະ ສັດ ຈາກ ບ້ານຫ້ວຍທອຍ. ນອກຈາກນີ້, ຍັງໄດ້ແນະນຳຊ່ອງທາງການຂາຍຜ່ານກຸ່ມທຸລະກິດລວມໝູ່ບ້ານຫ້ວຍທອຍນຳອີກ. ໃນກໍລະນີ, ຖ້າມີສິນຄ້າອື່ນໆທີຕ້ອງການຂາຍອອກແມ່ນສາມາດພົວພັນກັບກຸ່ມໄດ້ທຸກເວລາ. ມາຮອດ ເດືອນ ກໍລະກົດ ປີ 2023 ນີ້, ວຽກງານສົ່ງເສີມການຂາຍ ແລະ ການຕະຫລາດສາມາດຖືກສັງລວມສະຫຼຸບຂໍ້ມູນຜະລິດຕະພັນທີ່ໄດ້ຂາຍຜ່ານກຸ່ມທຸລະກິດລວມໝູ່ຂອງບ້ານຫ້ວຍທອຍ ຕາມຕາຕະລາງດ້ານຂ້າງນີ້.

| ລ/ດ | ຊື່ຜະລິດຕະພັນ | ຈຳນວນສະມາຊິກ | ຈ/ນໂຕທີ່ຂາຍ | ຈ/ນກິໂລ& ມັດທີ່ຂາຍ | ເງິນທີ່ໄດ້ຮັບທັງໝົດ | ເງິນກຳໄລຈາກການຂາຍສິນຄ້າ |
|---|---|---|---|---|---|---|
| 1 | ພືດຜັກ | 43 | | 522 | 11,075,000 | 495,000 |
| 2 | ເຫັດ | 21 | | 29 | 1,195,000 | 19,000 |
| 3 | ກົບ | 41 | 3,500 | | 3,500,000 | |
| 4 | ປາດຸກ | 40 | | | | |
| 5 | ໄກ່ | 102 | 71 | 83 | 5,905,000 | |
| 6 | ເປັດ | 55 | 85 | 194 | 9,900,000 | 100,000 |
| 7 | ໝູ | 21 | 1 | 140 | 6,300,000 | |
| 11 | ສິ້ນ | 60 | | 12 | 3,700,000 | |
| 12 | ຈອງ | 1 | | 70 | 3,200,000 | |
| 13 | ມີດ | 5 | | | | |
| 14 | ຈັກສານ | 9 | | | | |
| ລວມທັງໝົດ: | | 639 | 3,657 | 1,050 | 44,775,000 | 614,000 |





## 7. ມອບທຶນສະໜັບສະໜູນໃຫ້ແກ່ ສູນກາງສະຫະພັນແມ່ຍິງລາວ ແລະ ສະພາປະຊາຊົນແຂວງບໍລິຄໍາໄຊ ໃນການສະເຫຼີມສະຫຼອງວັນສ້າງຕັ້ງສະຫະພັນແມ່ຍິງລາວ ຄົບຮອບ 68ປີ.



ເນື່ອງໃນໂອກາດສະເຫຼີມສະຫຼອງວັນສ້າງຕັ້ງສະຫະພັນແມ່ຍິງລາວ ຄົບຮອບ 68 ປີ, ບໍລິສັດ ໄຟໄຟ້ານໍ້າເທີນ 1 ຈໍາກັດ ໄດ້ມອບທຶນສະໜັບສະໜູນ ຈໍານວນ 5,000,000 ກີບ ໃຫ້ແກ່ ສູນກາງສະຫະພັນແມ່ຍິງລາວ ໃນວັນທີ 21 ກໍລະກົດ 2023 ທີ່ຜ່ານມາ, ເຊິ່ງຕາງໜ້າມອບໂດຍ ທ່ານ ບຸນຍັງ ເພັງສຸວັນ, ທີ່ປຶກສາຝ່າຍພົວພັນກັບລັດຖະບານ ແລະ ກໍາມະການບໍລິຫານ ບໍລິສັດ ໄຟໄຟ້ານໍ້າເທີນ 1 ຈໍາກັດ ແລະ ໃຫ້ກຽດຮັບໂດຍ ທ່ານ ນາງ ອິນລາວັນ ແກ້ວບຸນພັນ, ກໍາມະການສູນກາງພັກ, ປະທານຄະນະບໍລິຫານງານ ສູນກາງສະຫະພັນແມ່ຍິງລາວ ພ້ອມຄະນະ.



ໃນວາລະດັ່ງກ່າວ, ທ່ານ ນາງ ອິນລາວັນ ແກ້ວບຸນພັນ ພ້ອມຄະນະ ໄດ້ໃຫ້ການຕ້ອນຮັບດ້ວຍບັນຍາກາດທີ່ອົບອຸ່ນ ແລະ ສະແດງຄວາມຂອບໃຈຕໍ່ການສະໜັບສະໜູນຈາກ ບໍລິສັດ ໄຟໄຟ້ານໍ້າເທີນ 1 ຈໍາກັດ. ນອກຈາກນີ້, ທ່ານ ນາງ ອິນລາວັນ ແກ້ວບຸນພັນ ຍັງໄດ້ຖືໂອກາດດັ່ງກ່າວນໍາສະເໜີວຽກງານ ແລະ ກິດຈະກໍາຕ່າງໆພາຍໃຕ້ການບໍລິຫານຂອງສູນກາງສະຫະພັນແມ່ຍິງລາວ ແລະ ຫວັງຢ່າງຍິ່ງວ່າຈະໄດ້ຮັບການສະໜັບສະໜູນ ແລະ ການຮ່ວມມື ຈາກບໍລິສັດເພີ່ມເຕີມໃນຕໍ່ໜ້າ. ພ້ອມກັນນັ້ນ, ທ່ານ ບຸນຍັງ ເພັງສຸວັນ ກໍ່ໄດ້ກ່າວຍ້ອງຍໍຊົມເຊີຍຕໍ່ຄວາມຄວາມສໍາເລັດໃນວຽກງານຕ່າງໆ ພາຍໃຕ້ການບໍ ລິຫານຂອງ ສູນກາງສະຫະພັນແມ່ຍິງລາວ ແລະ ຍັງໄດ້ສະແດງຄວາມເປັນຫ່ວງເປັນໄຍຕໍ່ກັບການພັດທະນາໄວໜຸ່ມ ໂດຍສະເພາະແມ່ຍິງໃນປະຈຸບັນ ທີ່ມີຄວາມທັນສະໄໝໃນການນໍາໃຊ້ເທັກໂນໂລຢີທີ່ມີຄວາມຫຼາກຫຼາຍໃນການຮັບຂໍ້ມູນຂ່າວສານ. ເຖິງຢ່າງໃດກໍ່ຕາມ, ທ່ານ ບຸນຍັງ ເພັງສຸວັນ ຍັງສະແດງຄວາມເຊື່ອໝັ້ນຕໍ່ແນວທາງການຊຸກຍູ້ ແລະ ການປຸກລະດົມຂອງສູນກາງສະຫະພັນແມ່ຍິງລາວ ທີ່ເປັນສ່ວນໜຶ່ງໃນການພັດທະນາໄວໜຸ່ມ ແລະ ສ້າງຄວາມອາດສາມາດໃຫ້ແກ່ແມ່ຍິງໃຫ້ມີຄຸນນະພາບ ແລະ ປະກອບສ່ວນເຂົ້າໃນການພັດທະນາສັງຄົມ.

ນອກຈາກນີ້, ໃນວັນທີ 19 ກໍລະກົດ 2023, ບໍລິສັດ ໄຟຟ້ານໍ້າເທີນ 1 ຈໍາກັດ ຍັງໄດ້ໃຫ້ການສະໜັບສະໜູນທຶນໃຫ້ແກ່ ສະຫະພັນແມ່ຍິງຮາກຖານ ສະພາປະຊາຊົນແຂວງ ຕາມການສະເໜີຂອງ ຄະນະເລຂາທິການ ສະພາປະຊາຊົນແຂວງບໍລິຄໍາໄຊ ເພື່ອຈັດຊື້ເສື້ອໂປໂລ ຈໍານວນ 33 ຜືນ ແລະ ຊຸກຍູ້ງົບປະມານຈັດກິດຈະກໍາປະຖະກະຖາວັນສ້າງຕັ້ງສະຫະພັນແມ່ຍິງ ຈໍານວນ 3,000,000 ກີບ ເພື່ອເປັນການປະກອບສ່ວນເຂົ້າໃນການສະເຫຼີມສະຫຼອງ ໃຫ້ມີຂະບວນການຟົດຟື້ນ ແລະ ເຫັນໄດ້ເຖິງຄວາມສໍາຄັນຂອງວັນສ້າງຕັ້ງດັ່ງກ່າວ.

## 8. ເອື້ອຍ-ອ້າຍ-ນ້ອງ ບໍລິສັດໄຟຟ້າ ນໍ້າເທີນ 1 ເຂົ້າຮ່ວມສະເຫຼີມສະຫຼອງ ວັນສ້າງຕັ້ງສະຫະພັນແມ່ຍິງລາວ ຄົບຮອບ 68ປີ



ບໍລິສັດ ໄຟໄຟ້ານໍ້າເທີນ 1 ຈໍາກັດ ໄດ້ສົມທົບທຶນ ແລະ ເຂົ້າຮ່ວມຫຼາຍກິດຈະກໍາຂອງ ສູນກາງສະຫະພັນແມ່ຍິງ ເນື່ອງໃນໂອກາດສະເຫຼີມສະຫຼອງວັນສ້າງຕັ້ງສະຫະພັນແມ່ຍິງລາວ ຄົບຮອບ 68 ປີ. ໃນນັ້ນ, ບໍລິສັດ ໄຟໄຟ້ານໍ້າເທີນ 1 ຈໍາກັດ ໄດ້ມອບທຶນສະໜັບ ສະໜູນໃນພິທີສະເຫຼີມສະຫຼອງວັນສ້າງຕັ້ງສະຫະພັນແມ່ຍິງລາວ ຄົບຮອບ 68 ປີ, ພາຍໃຕ້ຫົວຂໍ້: ການສ້າງຄວາມເຂັ້ມແຂງໃຫ້ກັບແມ່ຍິງ ທາງດ້ານເສດຖະກິດໃນໄລຍະໃໝ່ ຄັ້ງວັນທີ 14 ກໍລະກົດ 2023 ທີ່ສູນການຮ່ວມມື ແລະ ຝຶກອົບຮົມລາວ-ຍີ່ປຸ່ນ (ICTC), ເຊິ່ງຕາງໜ້າເຂົ້າຮ່ວມ ແລະ ຮັບໃບຍ້ອງຍໍ ໂດຍ ທ່ານ ນາງ ສອນດາລີນ ພູມວົງໄຊ - ຜູ້ອໍານວຍການພະແນກສັງຄົມ ພ້ອມດ້ວຍທີມງານ.

ນອກຈາກນີ້, ເອື້ອຍ-ອ້າຍ-ນ້ອງ ພະນັກງານ ບໍລິສັດ ໄຟໄຟ້ານໍ້າເທີນ 1 ຍັງໄດ້ເຂົ້າຮ່ວມກິດຈະກໍາບໍລິຈາກເລືອດ ເນື່ອງໃນໂອກາດສະເຫຼີມສະຫຼອງດັ່ງກ່າວ. ໃນນັ້ນ, ໄດ້ມີກິດຈະກໍາບໍລິຈາກເລືອດ ຢູ່ທີ່ຫ້ອງການພາກສະໜາມ ເຂື່ອນໄຟຟ້ານໍ້າເທີນ 1 ທີ່ ເມືອງປາກກະດິງ ໃນວັນທີ 13 ກໍລະກົດ 2023, ເຊິ່ງມີຜູ້ເຂົ້າຮ່ວມກິດຈະກໍາບໍລິຈາກ 13 ທ່ານ ແລະ ຮັບການບໍລິຈາກເລືອດຄັ້ງນີ້ໂດຍ ອົງການກາແດງແຂວງ ສູນເລືອດແຂວງບໍລິຄໍາໄຊ. ພ້ອມກັນນັ້ນ, ທ່ານ ນາງ ສອນດາລີນ ພູມວົງໄຊ ກໍ່ໄດ້ຕາງໜ້າເຂົ້າຮ່ວມບໍລິຈາກເລືອດ ທີ່ ສູນການຄ້າລາວໄອເຕັກ, ນະຄອນຫຼວງວຽງຈັນ, ວັນທີ 21 ກໍລະກົດ 2023. ການບໍລິຈາກດັ່ງກ່າວເປັນການປະກອບສ່ວນທີ່ສໍາຄັນເພື່ອຊ່ວຍເຫຼືອສັງຄົມ.







**ຂ່າວສານສັງຄົມປະຈຳເດືອນ ກໍລະກົດ (7) 2023 ຂອງ ບໍລິສັດ ໄຟຟ້ານ້ຳເທີນ 1 ຈຳກັດ ມີຈຸດປະສົງ ເພື່ອນຳສະເໜີ ກ່ຽວກັບ ບັນດາກິດຈະກຳຕ່າງໆທີ່ໄດ້ຈັດຕັ້ງປະຕິບັດໂດຍ ບໍລິສັດ ໄຟຟ້ານ້ຳເທີນ 1 ຈຳກັດ, ພະນັກງານ, ແລະ ຜູ້ຕາງໜ້າທີ່ກ່ຽວຂ້ອງກັບ ບໍລິສັດ ເຊັ່ນ: ວຽກງານດ້ານສັງຄົມ ແລະ ສິ່ງແວດລ້ອມ, ເຊິ່ງກວມເອົາວຽກງານຍົກຍ້າຍ-ຈັດສັນ, ການສຶກສາ, ສາທາລະນະສຸກ, ການສົ່ງເສີມຄວາມເຂັ້ມແຂງໃຫ້ກັບອົງການຈັດຕັ້ງບ້ານ, ວຽກງານພົວພັນກັບລັດຖະບານ ແລະ ກິດຈະກຳອື່ນໆກ່ຽວກັບ ໂຄງການ ເຂື່ອນໄຟຟ້ານ້ຳເທີນ 1.**

**ຂໍ້ມູນຕ່າງໆທີ່ໄດ້ນຳສະເໜີໃນຂ່າວສານສະບັບນີ້ແມ່ນໄດ້ສັງລວມຈາກໜ່ວຍງານສັງຄົມປະຈຳຢູ່ຫ້ອງການພາກສະໜາມ ທີ່ ເມືອງ ວຽງທອງ, ແຂວງ ບໍລິຄຳໄຊ ແລະ ໜ່ວຍງານພົວພັນກັບລັດຖະບານ, ຮຽບຮຽງ ແລະ ອອກແບບໂດຍ ໜ່ວຍງານສື່ສານ, ຊຶ່ງໄດ້ ຮັບການນຳພາ ແລະ ກວດແກ້ໂດຍ ຜູ້ອຳນວຍການພະແນກສັງຄົມ (CSR).**

ຂໍ້ມູນຕິດຕໍ່:

ບໍລິສັດ ໄຟຟ້ານ້ຳເທີນ 1 ຈຳກັດ, ສຳນັກງານໃຫຍ່

ໜ່ວຍ 15, ຖະໜົນສີທອງ, ບ້ານປາກທ້າງ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສ.ປ.ປ ລາວ

ໂທ +856 21 550775

ອີເມວ info@nt1pc.com

NAMTHEUN1